ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 1:
## Literature in the Lan Xang Kingdom
## from 1357 – 1690

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 1:** ວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງແຕ່ປີ ຄສ 1357-1690 ເວລາ: 90 ນາທີ
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Result)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goal):<br>ນັກຮຽນຈະຮູ້ສະພາບ:<br>- ທາງດ້ານພູມສາດ<br>- ປະຫວັດສາດ<br>- ວັນນະຄະດີ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈສະພາບ:<br>- ພູມສາດ<br>- ປະຫວັດສາດ<br>- ວັນນະຄະດີສະໄໝນາຈັກລ້ານຊ້າງ</td><td>ຄໍາຖາມຫຼັກ (Question):<br>1) ນາຈັກລາວລ້ານຊ້າງຕັ້ງຢູ່ໃສ ແລະ ຕິດກັບປະເທດໃດແດ່? (ເມື່ອກ່ອນ ແລະ ປັດຈຸບັນ)<br>2) ພູມສັນຖານຂອງລາວມີລັກສະນະແນວໃດ?<br>3) ພູມສັນຖານດັ່ງກ່າວ ສິ່ງຜົນສະທ້ອນແນວໃດຕໍ່ກັບປະຊາຊົນລາວ ແລະ ນັກແຕ່ງ?<br>4) ກ່ອນສະຕະວັດທີ XIV ເມືອງລາວປະຖົມບູຮານເປັນແນວໃດ?<br>5) ສະຕະວັດທີ XIV ເມືອງລາວປະຖົມບູຮານເປັນແນວໃດ?<br>6) ລັກສະນະລວມຂອງວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງເປັນແນວໃດ?<br>(ເວົ້າໂດຍຫຍໍ້)<br>7) ບົດວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງບົດທໍາອິດມີຊື່ວ່າແນວໃດ?</td></tr>
</table>

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

| | |
|---|---|
| | 8) ບົດວັນນະຄະດີຮຽນໃນສະໄໝອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງມີບົດໃດແດ່? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງທີ່ຕັ້ງ, ພູມສັນຖານ, ຫົວເມືອງລາວປະຖົມບູຮານ, ລັກສະນະຂອງວັນນະຄະດີລ້ານຊ້າງ, ບັນດາບົດວັນນະຄະດີສະໄໝລ້ານຊ້າງຮຸ່ງເຮືອງ. | **ທັກສະ (Skill):**<br>- ອະທິບາຍໄດ້ເຖິງທີ່ຕັ້ງ, ພູມສັນຖານ, ສະພາບປະຫວັດສາດ, ສະພາບວັນນະຄະດີ ສະໄໝອານາຈັກລ້ານຊ້າງຈະເລີນຮຸ່ງເຮືອງ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ** | |
| **ໜ້າວຽກສິດສອນ (Task):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |

❖ **ສື່ການສອນມີ:**

ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ແຜນທີ່ສະໄໝລ້ານຊ້າງ ແລະ ປັດຈຸບັນ, ຄອມພິວເຕີ, ເຄື່ອງສາຍ LCD.

❖ **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

**I. ທວນຄືນບົດຮຽນເກົ່າ**

❖ ເນື່ອງຈາກເປັນຊົ່ວໂມງທຳອິດບໍ່ມີບົດຮຽນເກົ່າ, ຄູນຳວິຊາຮຽນໃຫ້ນັກຮຽນ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 1**

**ວັນນະຄະດີຮຽນສະໄໝອານາຈັກລາວລ້ານຊ້າງ ແຕ່ປີ ຄສ 1357-1690**

**1. 1 ບາງຈຸດທາງດ້ານພູມສາດ** (30 ນາທີ)

<u>ກິດຈະກຳ 1:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ນາຈັກລາວລ້ານຊ້າງຕັ້ງຢູ່ໃສ ແລະ ຕິດກັບປະເທດໃດແດ່? (ເມື່ອກ່ອນ ແລະ ປັດຈຸບັນ)
2) ພູມສັນຖານຂອງລາວມີລັກສະນະແນວໃດ?
3) ພູມສັນຖານດັ່ງກ່າວ ສິ່ງຜົນສະທ້ອນແນວໃດຕໍ່ກັບປະຊາຊົນລາວ ແລະ ນັກແຕ່ງ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ອານາຈັກລາວລ້ານຊ້າງຕັ້ງຢູ່ທາງທິດຕາເວັນອອກຂອງແຫຼມອິນດູຈີນ ຫຼື ແຫຼມທອງເຊິ່ງມີ 4 ທິດຕິດກັບ 5 ປະເທດຄື: ທິດຕາເວັນອອກຕິດກັບປະເທດຫວຽດນາມຕາມສາຍພູນໍ້າແບງ, ທິດຕາເວັນອອກສ່ຽງໃຕ້ຕິດກັບປະເທດຈາມ ແລະ ຂະເໝນຕັ້ງແຕ່ລີ່ຜີຂຶ້ນມາ, ທິດຕາເວັນຕົກສ່ຽງໃຕ້ ແລະ ທິດຕາເວັນຕົກ (ທິດທັກຂິນ ແລະ ຫໍລະດີ) ຕິດກັບດິນແດນຂອງກຸງສີອະຍຸດທະຍານັບແຕ່ສາຍພູດົງພະຍາໄຟ (ປັດຈຸບັນເອີ້ນດົງພະຍາເຢັນ) ໄປຮອດນະຄອນໄທ, ທາງທິດປັດສິມ (ທິດຕາເວັນອອກສ່ຽງເໜືອ) ຕິດກັບອານາຈັກລ້ານນານັບແຕ່ເມືອງຜາລົງມາ, ທິດອຸດອນ (ທິດເໜືອ) ຕິດກັບປະເທດຈີນນັບແຕ່ເມືອງບຸນໃຕ້ບຸນເໜືອລົງມາ.

ທີ່ຕັ້ງຂອງອານາຈັກລາວລ້ານຊ້າງມີຊາຍແດນອັນຍືດຍາວ, ມີພູຜາປ່າດົງອັນຕຶບໜາ, ຮູບພາບປະເທດສັບສົນສາມາດແບ່ງອອກເປັນສາມພາກສ່ວນຄື: ພາກເໜືອ, ພາກກາງ ແລະ ພາກໃຕ້. ພາກເໜືອສ່ວນໃຫຍ່ເປັນເຂດພູຜາສູງຊັນສະຫຼັບສັບຊ້ອນກັນປານເກັດລີ່ນ ແລະ ປະກອບດ້ວຍປ່າໄມ້ອັນຕຶບໜາ, ການທໍາມາຫາກິນ ແລະ ໄປມາຂົນສົ່ງພົບຄວາມຫຍຸ້ງຍາກຫຼາຍປະການພູຜາປ່າດົງອັນຕຶບໜານັ້ນປະກອບເປັນສິນຄ້າ ແລະອຸປະກອນໃນການສ້າງບ້ານເມືອງເປັນຢ່າງດີ. ພາກເໜືອຍັງມີພູພຽງ ແລະ ທົ່ງພຽງໜ້ອຍຫຼາຍແຫ່ງທີ່ສັບຊ້ອນຢູ່ຕາມຮ່ອມພູເປັນບ່ອນທໍາມາຫາກິນຂອງປະຊາຊົນໃນເຂດນີ້ເປັນຢ່າງດີເຊັ່ນ: ການເຮັດໄຮ່ໄຖນາ, ລ້ຽງສັດສາວາສິ່ງ ແລະ ອື່ນໆ... ພາກເໜືອຍັງມີອາກາດໜາວເຢັນເປັນການສະດວກໃຫ້ແກ່ການປູກພືດ, ຕົ້ນໄມ້ອຸດສາຫະກໍາຕ່າງໆ.

ພາກກາງ ແລະ ພາກໃຕ້ສ່ວນຫຼາຍແມ່ນພູພຽງ ແລະ ທົ່ງພຽງ, ພູມີໜ້ອຍ. ດັ່ງນັ້ນ, ການທໍາມາຫາກິນຂອງປະຊາຊົນເຂດນີ້ຈິ່ງມີຄວາມສະດວກສະບາຍ, ນອກນີ້ປ່າໄມ້ນາໆຊະນິດກໍມີຫຼາຍສາມາດປະກອບສ່ວນເປັນສິນຄ້າໃຫ້ແກ່ປະຊາຊົນລາວເພື່ອແລກປ່ຽນເອົາທຶນຮອນນໍາມາສ້າງສາປະເທດຊາດບ້ານເມືອງໃຫ້ຈະເລີນຮຸ່ງເຮືອງ. ພູພຽງ ແລະ ທົ່ງພຽງຍັງເປັນບ່ອນທໍາມາຫາກິນລ້ຽງຊີບຂອງປະຊາຊົນເປັນຢ່າງດີເຊັ່ນ: ການເຮັດໄຮ່ໄຖນາ, ການລ້ຽງສັດສາວາສິ່ງ ແລະ ອື່ນໆ... ດັ່ງນັ້ນ, ທາງພາກກາງ ແລະ ພາກໃຕ້ຈິ່ງເປັນພາກທີ່ອຸດົມຮັ່ງມີໄປດ້ວຍຊັບພະຍາກອນທໍາມະຊາດເປັນອູ່ເຂົ້າອູ່ປາຂອງປະເທດຊາດ; ປ່າໄມ້ຍັງປະກອບເປັນສິນຄ້າອັນຮັ່ງມີແລ້ວຍັງເປັນທັດສະນີຍະພາບອັນສວຍສົດງົດງາມເພື່ອໃຫ້ຄົນເຮົາໄດ້ເບິ່ງໄດ້ຊົມ, ຜ່ອນກາຍສະບາຍຈິດໃຈຍາມອິດເມື່ອຍ, ຍາມໂສກເສົ້າສ້າງຄວາມສົດຊື່ນແຈ່ມໃສໃຫ້ແກ່ຄົນເຮົາອີກດ້ວຍ.

ອານາຈັກລາວລ້ານຊ້າງນັບແຕ່ເໜືອເຖິງໃຕ້ມີແມ່ນໍ້າລໍາເຊ, ຫ້ວຍຮ່ອງຄອງບຶງຢ່າງຫຼວງຫຼາຍເປັນບ່ອນຫາລ້ຽງຊີບຂອງປະຊາຊົນລາວທັງຊາດ, ເປັນບ່ອນຟື້ນຟູເສດຖະກິດທີ່ດີ, ໄປມາຂົນສົ່ງສະດວກ. ແມ່ນໍ້າລໍາເຊນອກຈາກຈະປະກອບສ່ວນເປັນພື້ນຖານເສດຖະກິດແລ້ວຍັງເປັນບ່ອນລະບາຍຄວາມໂກດແຄ້ນ, ເຮັດໃຫ້ຄົນເຮົາຜ່ອນຄາຍສະບາຍຈິດພູມີປະເທດຂອງລາວເຮົາມີປະໂຫຍດຢ່າງຫຼວງຫຼາຍເປັນສິ່ງຊຸກຍູ້ໃຫ້ຄົນເຮົາມີຄວາມຮັກຊາດ, ຮັກບ້ານເກີດເມືອງນອນ, ຜ່ານການຕໍ່ສູ້ຕ້ານສັດຕູພາຍນອກເຂົ້າມາຮຸກຮານເພື່ອປົກປັກຮັກສາປະເທດຊາດກໍຄືເຂດນໍ້າແດນດິນໃຫ້ມີສັນຕິພາບ ເອກະລາດ ແລະ ຄວາມຢູ່ເຢັນເປັນສຸກ.

ແຕ່ບູຮານນະການຈົນເຖິງປັດຈຸບັນ, ປະຊາຊົນລາວໄດ້ສະແດງນໍ້າໃຈຮັກຊາດດ້ວຍຄວາມພາກພູມໃຈຕໍ່ຄວາມສວຍສົດງົດງາມຂອງທໍາມະຊາດນາໆຊະນິດເຊັ່ນ: ພູຜາປ່າດົງ, ສັດສາວາສິ່ງ, ຫ້ວຍນໍ້າລໍາເຊ, ບວກໜອງຄອງບຶງຕ່າງໆທໍາ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ມະຊາດເຫຼົ່ານັ້ນເປັນບ່ອນອູ້ມຊູການດຳລົງຊີວິດຂອງປະຊາຊົນລາວ ນັບແຕ່ມື້ກຳເນີດຈົນເຖິງມື້ຕາຍ, ທຳມະຊາດເຫຼົ່ານັ້ນບັງເປັນບ່ອນເຮັດໃຫ້ວັນນະຄະດີຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ພາບທຳມະຊາດດັ່ງກ່າວສ້າງຄວາມພາກພູມໃຈໃຫ້ແກ່ນັກຮຽນ ແລະ ນັກແຕ່ງທັງຫຼາຍເອົາມາເປັນຫົວເລື່ອງໃນການປະດິດແຕ່ງເປັນບົດແຕ່ງຂອງຕົນເອງເໝາະກັບສະພາບຄວາມເປັນຈິງຂອງປະເທດຊາດເຊັ່ນ: ສຽງນ້ຳໂຕນຕາດ, ສຽງນົກສຽງກາ, ສຽງລົມພັດ ແລະ ອື່ນໆ... ດັ່ງຄຳກອນຕອນໜຶ່ງໄດ້ຂຽນວ່າ:

| | |
|---|---|
| ນ້ຳຕົກຕາດ | ຄືນ້ອງແກວ່ງຫຼາ |
| ນ້ຳໂຕນຜາ | ຄືນ້ອງແກວ່ງອື້ອ |
| ຟ້າຍົກຄື້ວ | ຄືນ້ອງແກວ່ງແຂນ |

ນັບແຕ່ດຶກດຳບັນເປັນຕົ້ນມາ ທຳມະຊາດໄດ້ຝັງເລິກເຂົ້າໃນຈິດໃຈ ແລະມັນສະໝອງຂອງຄົນລາວທຸກຄົນ, ເພາະທຳມະຊາດຂອງປະເທດຊາດໄດ້ສະໜິດຕິດພັນກັບການດຳລົງຊີວິດຂອງຄົນເຮົາຢ່າງແຍກອອກຈາກກັນບໍ່ໄດ້ເວລາກຳເນີດພົ້ນຈາກທ້ອງແມ່ມາເດັກທັງຫຼາຍກໍໄດ້ນອນໃນຜືນອູ່ທີ່ເຮັດດ້ວຍໄມ້ ແລະ ດ້ວຍຫວາຍໃຕ້ສຽງກ່ອມຂອງຜູ້ເປັນແມ່ວ່າ:

| | |
|---|---|
| ນອນສາເຢີ | ຄຳສີງເອີຍ |
| ແມ່ເຈົ້າເມື່ອຍ | ຍົກແຄ່ງບໍ່ລາ |
| ແມ່ເຈົ້າເມື່ອຍ | ຍົກຂາບໍ່ຂຶ້ນ |
| ມີແຕ່ຮຳພຽນສ້າງ | ການນາທຸກເຊົ້າຄ່ຳ |
| ຄິດຢາກໄດ້ເຂົ້າ | ມາລ້ຽງເຈົ້າໃຫ້ໃຫຍ່ສູງ |

ເມື່ອເຕີບໂຕໃຫຍ່ກ້າໜ້າບານມາແລ້ວ, ການເຄື່ອນໄຫວດຳລົງຊີວິດຂອງຄົນເຮົາແມ່ໄດ້ທ່ຽວໄປຊອກຫາຢູ່ຫາກິນທົ່ວສາລະທິດຂອງບ້ານເມືອງໃນເວລານີ້ເຂົາເຈົ້າໄດ້ເຫັນຫຼາຍສິ່ງຫຼາຍແນວທີ່ປາກົດອອກໃນທຳມະຊາດເຊັ່ນ: ຕົ້ນໄມ້ໃບຫຍ້າ, ສຽງນົກໜູປູປີກຮ້ອງ, ສຽງທະນີຮ້ອງຫາຄູ່ ແລະອື່ນໆ... ເຫດການ ແລະ ປະກົດການໃນທຳມະຊາດດັ່ງກ່າວ, ກໍພາໃຫ້ເຂົາເຈົ້ານຳມາປະດິດແຕ່ງເນື້ອໃນວັນນະຄະດີທີ່ດູດດື່ມ ແລະອອນຊອນຕໍ່ຜູ້ອ່ານ ແລະ ຜູ້ຟັງເປັນຢ່າງດີຄື:

| | |
|---|---|
| ອັນດົງນີ້ | ໄມ້ມ່ອງມີຫຼາຍ |
| ໄມ້ດູ່ລາຍ | ດຳດອນໄມ້ນອດ |
| ເປັນໝາກແລ້ວ | ເຈຍບ່າງມາກິນ |
| ສຸກແຕ່ກິນ | ຜອງເທົ້າຮອດງ່າ |

ຢູ່ຕາມປ່າກໍມີນົກໜູ ແລະ ສັດສາວາສິ່ງອາໄສຢູ່ຢ່າງຫຼວງຫຼາຍ, ພວກມັນພ້ອມກັນຢູ່ເປັນຈຸ, ເປັນໝູ່ສິ່ງສຽງຮ້ອງຊົວແຊວ, ສ້າງໃຫ້ປ່າດົງແຫ່ງນັ້ນມີບັນຍາກາດເນືອງນອງ, ເປັນສິ່ງຈູງໃຈຕໍ່ຜູ້ໄດ້ພົບເຫັນ ແລະ ສ້າງຄວາມມ່ວນຊື່ນນຳອີກດ້ວຍເຊັ່ນ:

| | |
|---|---|
| ສຽງນົກເປົ້າ | ນົກຂຸ້ມ ນົກທາ |

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ສິບມັນໝາ ມັນຊໍ້າຮ້ອງອວດ

ມັນຮ້ອງອວດ ຮອກຈ້ອນຕ່າຍແຕ

ສິ່ງຕ່າງໆເຫຼົ່ານີ້ໄດ້ສະແດງອອກໃຫ້ເຮົາເຫັນຢ່າງຈະແຈ້ງທີ່ສຸດໃນວັນນະຄະດີພື້ນເມືອງລາວຂອງພວກເຮົາ, ນອກນັ້ນຍັງສະແດງອອກຜ່ານກາບກອນ, ບົດໜັງສືເລື່ອງຕ່າງໆໃນສະໄໝອານາຈັກລາວລ້ານຊ້າງ, ນໍ້າໃຈຮັກຫອມບ້ານເກີດເມືອງນອນ, ບົດເພັງຕ່າງໆທີ່ປະຊາຊົນນິຍົມຊົມຊອບກໍຍັງສືບທອດມາຮອດປັດຈຸບັນ. ດັ່ງນັ້ນ, ຈຶ່ງເຫັນໄດ້ວ່າທໍາມະຊາດໄດ້ມີບົດບາດສໍາຄັນຕໍ່ວຽກງານການປະດິດແຕ່ງດ້ານສິລະປະວັນນະຄະດີ; ທໍາມະຊາດຍັງເປັນບ່ອນເຊື່ອງຊ້ອນປົກປັກຮັກສາກໍາລັງຂອງຂະບວນການຕໍ່ສູ້ຕ້ານການຮຸກຮານຂອງສັດຕູພາຍນອກອີກດ້ວຍ. ໃນທ່າມກາງສຽງປືນຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າຕ້ານກັບຈັກກະພັດຝຣັ່ງ ແລະ ອາເມລິກາ, ເພື່ອຍາດເອົາຄວາມເປັນເອ ກະລາດທໍາມະຊາດຍິ່ງມີຄວາມສໍາຄັນຫາອັນປຽບບໍ່ໄດ້ (ສົມທະເພີຍ ສີວົງສັກ ແລະອໍາໄພ ສອນທະລາ, 2019; ).

**ລວມຄວາມວ່າ:** ພູມມີປະເທດຂອງລາວເຮົາ ມີຄວາມສໍາຄັນທາງຍຸດທະສາດໃນການຕໍ່ສູ້ຕ້ານການຮຸກຮານ ແລະ ບົນພື້ນຖານເສດຖະກິດ, ວັດທະນາທໍາສັງຄົມ, ອີງຕາມແຕ່ລະຍຸກສະໄໝຂອງມັນ. ສະນັ້ນ, ພວກເຮົາທຸກຄົນ, ຕ້ອງພ້ອມກັນປົກປັກຮັກສາສະພາບທໍາມະຊາດຂອງບ້ານເຮົາໄວ້ໃຫ້ໝັ້ນຄົງທະນົງແກ່ນໄປຊົ່ວລູກ, ຊົ່ວຫຼານຂອງເຮົາໃນພາຍໜ້າຍັງໄດ້ເຫັນຄວາມຈີບງາມຂອງທໍາມະຊາດດັ່ງກ່າວໄປຕະຫຼອດກາລະນານ (ສົມທະເພີຍ ສີວົງສັກ ແລະອໍາໄພ ສອນທະລາ:2019.

**1.2 ສະພາບປະຫວັດສາດ** (30 ນາທີ)

<u>ກິດຈະກໍາ 2:</u>

ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ:

1. ກ່ອນສະຕະວັດທີ XIV ເມືອງລາວປະຖົມບູຮານເປັນແນວໃດ?
2. ສະຕະວັດທີ XIV ເມືອງລາວປະຖົມບູຮານເປັນແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູນັກສຶກສາສະຫຼຸບຮ່ວມກັນ: (20 ນາທີ)

ປະເທດລາວມີຄົນລາວດໍາລົງຊີວິດຢູ່ພື້ນແຜ່ນດິນແຫ່ງນີ້ກໍຄົນນານພໍສົມຄວນແຕ່ຢູ່ໃນປີໃດນັ້ນພວກເຮົາກໍບໍ່ອາດຮູ້ແຈ້ງໄດ້ເທື່ອຢາກຮັບຮູ້ບັນຫານີ້ຢ່າງຖືກຕ້ອງ ພວກເຮົາຕ້ອງໄດ້ຄົ້ນຄ້ວາຢ່າງລັກແນ່, ອີງໃສ່ເຄື່ອງວັດຖຸບູຮານທີ່ຄົ້ນພົບຢູ່ໃນແຫ່ງຕ່າງໆໃນສຸວັນນະພູມລາວແຫ່ງນີ້ມາເປັນສິ່ງສັນນິຖານເຊັ່ນ:

ຢູ່ຫຼວງພະບາງເຂົ້າຊອກຄົ້ນພົບທີ່ຖໍ້າປ້ອງ ແລະ ສາຍພູຊຽງທອງ ມີເຄື່ອງເຮັດດ້ວຍຫີນເອົາມາຈາກພື້ນນໍ້າເຊັ່ນວ່າ: ສິ່ວ,ແຫຼມມີງ່ຽງ, ຫຼາວ, ຫອກປາຍແຫຼມທີ່ເຮັດດ້ວຍກະດູກ ແລະ ງາ. ເຄື່ອງເຫຼົ່ານີ້ແມ່ນເຄື່ອງທີ່ຄົ້ນພົບຢູ່ຖໍ້າທ້າວຖໍ້ານາງຫ່າງຈາກເມືອງຫຼວງພະບາງປະມານ 10 ກິໂລແມັດເຊັ່ນ: ເຄື່ອງມືສໍາລັບຕັດ, ຂຸດ, ເຈາະ ແລະ ອື່ນໆ.ພິເສດແມ່ນຄົ້ນພົບສິ່ວ, ຂວານ ເຊິ່ງມັນມີຮູສະໜໍ່າສະເໝີ ແລະ ເຄື່ອງທີ່ເຮັດດ້ວຍຫີນອີກຫຼາຍຊະນິດ, ຄົ້ນພົບຂວານທອງທີ່ມີລັກສະນະລວດລາຍຕ່າງໆ...

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ຢູ່ຊຽງຂວາງ ພູພຽງຊຽງຂວາງຢູ່ທົ່ງໄຫຫີນຍັງມີໄຫຫີນທີ່ເຮັດດ້ວຍຫີນໜ່ວຍໃຫຍ່ ແລະ ມີລັກສະນະທີ່ແຕກຕ່າງກັນຫຼາຍຢ່າງມີໜ່ວຍໃຫຍ່ ແລະ ໜ່ວຍນ້ອຍ, ມີບາງໜ່ວຍໜັກຈົນເຖິງ 13 ໂຕ່ນ, ສູງກ່ວາ 3 ແມັດ, ເພິ່ນໄດ້ຂຸດເບິ່ງໄຫຫີນທີ່ກ່າວມາຂ້າງເທິງນັ້ນ, ກໍເຫັນຮູບຮ່າງຂອງສິ່ງວັດຖຸຕ່າງໆທີ່ບູຮານສ້າງໄວ້ໃນສະໄໝກ່ອນເຊັ່ນ: ຫີນມີບົມ, ສິ່ວເຮັດດ້ວຍຫີນທີ່ມີດ້າມມີດັນລັກແປ່.

ຢູ່ຄໍາມ່ວນ ເພິ່ນໄດ້ຄົ້ນພົບເຄື່ອງຂອງຈໍານວນໜຶ່ງຢູ່ໃນຖໍ້າທີ່ມີຮ່ອງຮ້ອຍຂອງຄົນບູຮານປະໄວ້ ແລະ ຕັ້ງພູມລໍາເນົາຢູ່ແຫ່ງນັ້ນ, ເຂົາເຈົ້າຄົ້ນພົບຢູ່ເງີບຫີນທີ່ບ້ານກວານພະນາງ, ຖໍ້າບ້ານບາງ ແລະ ຖໍ້າມະຫາໄຊພິເສດແມ່ນຢູ່ຖໍ້າຫີນບູນຍົມມະລາດ, ເພິ່ນຊອກເຫັນກະດູກສັດ, ກະດູກຄົນ, ເຄື່ອງປັ້ນ, ເຄື່ອງເອ້, ເຄື່ອງປະດັບຮ່າງກາຍທີ່ເຮັດດ້ວຍເປືອກຫອຍ, ເຮັດດ້ວຍກາບກີ້, ຫອຍກາບກ້ວາງ, ການຂະຫຍາຍຕົວໃນຖໍ້າຕ່າງໆຂອງແຂວງຄໍາມ່ວນອາດນໍາພວກເຮົາສັນນິຖານໄດ້ວ່າ: ນັ້ນແມ່ນຄວາມສີວິໄລໃນສະໄໝຫີນໃໝ່, ຖ້າວ່າການຈະເລີນໃນສະໄໝຫີນໃໝ່ແມ່ນຫ່າງຈາກພວກເຮົາປະມານ (5000-3000 ປີ) ກ່ອນຄຼິດຕະສັງກຼາດ ຫຼື ກ່ອນ ຄສ.

ອີງໃສ່ວັດຖຸທີ່ຄົ້ນພົບຢູ່ຕາມແຂວງຕ່າງໆທີ່ກ່າວມາຂ້າງເທິງນັ້ນເຮົາອາດເວົ້າໄດ້ວ່າ: ປະເທດລາວຂອງພວກເຮົາມີຄົນມາດໍາລົງຊີວິດຢູ່ແຕ່ດົນນານແລ້ວ, ໄລຍະເວລາກ່ອນ ຫຼື ຫຼັງຄຼິດຕະສັງກຼາດຫຼາຍພັນປີ. ອັນນີ້ພຽງແຕ່ຍົກໃຫ້ເຫັນພຽງເລັກນ້ອຍຖ້າຢາກຊັດເຈນກ່ວານີ້, ເຮົາຕ້ອງໄດ້ອີງໃສ່ນັກຄົ້ນຄ້ວາທາງວັດຖຸບູຮານເພິ່ນຈະໃຫ້ຄວາມກະຈ່າງແຈ້ງກວ່ານີ້.

- ນັບແຕ່ສະໄໝກ່ອນສັດຕະວັດທີ່ XIV ຄົນລາວບູຮານອາດດໍາລົງຊີວິດຢູ່ໃນລະບອບປະຖົມບູຮານ ຫຼື ລະບອບຂ້າໃຊ້ ແລະ ສັກດີນາແບ່ງແດນ. ເປັນຫຍັງພວກເຮົາຈິ່ງສາມາດເວົ້າໄດ້ຄືແນວນັ້ນ, ພວກເຮົາໄດ້ອີງໃສ່ເຄື່ອງວັດຖຸບູຮານທີ່ຄົ້ນ ຄວ້າຜ່ານມາອີງໃສ່ສະພາບຕົວຈິງຂອງສັງຄົມລາວໃນຄາວນັ້ນມີຮ່ອງຮອຍຂອງການດໍາລົງຊີວິດແບບປະຖົມບູຮານຍັງຄ້າງຄາຢູ່ເຊັ່ນ: ການດໍາລົງຊີວິດແບບກົກເຫຼົ່າ ແລະ ອື່ນໆ. ເມືອງລາວປະຖົມບູຮານໄດ້ຂະຫຍາຍຕົວຢູ່ກະແຈກກະຈາຍຕາມລ້ອງແມ່ນໍ້າຂອງ ແລະສຸວັນນະພູມເຊັ່ນ ເມືອງສີໂຄດຕະບູນ, ຈໍາປາສັກ, ເມືອງຊວາ, ເມືອງພວນ... ປົກຄອງດ້ວຍລະບອບສັກດີນາ, ຫົວເມືອງນ້ອຍຂຶ້ນກັບຫົວເມືອງໃຫຍ່.

ໃນລະຫວ່າງກາງສະຕະວັດທີ XIV ນີ້ເອງເຈົ້າຟ້າງຸ່ມໄດ້ນໍາພາປະຊາຊົນລາວເຂດຕອນກາງລ້ອງແມ່ນໍ້າຂອງດໍາເນີນການຕໍ່ສູ້ດ້ວຍກໍາລັງປະກອບອາວຸດຕະຫຼອດໄລຍະ 9 ປີ (1349) ສະໄໝປະເທດຊາດເປັນຫົວເມືອງສ່ວຍຂອງສັກດີນາສຸໂຂໄທໄດ້ສ້ຽງສຸດລົງ. ພະອົງໄດ້ເຕົ້າໂຮມຫົວເມືອງລາວດຶກດໍາບັນຕັ້ງແຕ່ນ້ອຍຫາໃຫ່ຍເຂົ້າເປັນອານຈັກເອກະລາດເອກະພາບມີອານາເຂດກ້ວາງຂວາງ ແລະ ນັບມື້ນັບຂະຫຍາຍຕົວເຂັ້ມແຂງໃນບໍລິເວນແຫຼມອິນດູຈີນ. ເຈົ້າຟ້າງຸ່ມໄດ້ທໍາການທ້ອນໂຮມເອົາບັນດາຫົວເມືອງລາວຕ່າງໆເຂົ້າເປັນອັໜຶ່ງອັນດຽວກັນ, ປະກາດເປັນອານາຈັກລ້ານຊ້າງເອກະລາດເອກະພາບຂຶ້ນໃນປີ ຄສ 1357.

ກາງ-ທ້າຍສະຕະວັດທີ XVI ໃຕ້ການປົກຄອງຂອງເຈົ້າໂພທິສະລາດ, ເສດຖາທິລາດ ປຊ ລ້ານຊ້ານໄດ້ຕໍ່ສູ້ຕ້ານການຮຸກຮານຂອງສັກດີນພະມ້າ ໄດ້ຮັບໄຊຊະນະ ທັບມ້າງຄໍາຂວັນ “ຜູ້ຊະນະສິບທິດ”. ກ້າວເຂົ້າສູ່ໄລຍະການສ້າງສາພັດທະນປະເທດຊາດ.

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ມາຮອດກາງສະຕະວັດທີXVII ສະໄໝເຈົ້າສຸລິຍະວົງສາທຳມະກະລາດ ພະອົງໄດ້ດຳລົງອຳນາດປະຊາທິປະໄຕລວມສູນສູງສຸດ, ບໍ່ຄິດລ້ຽວ, ຍຸດຕິທຳ, ປະຊາຊົນເຄົາລົບນັບຖື. ໃຕ້ການນຳພາຂອງພະອົງອານາຈັກລາວລ້ານຊ້າງໄດ້ກ້າວເຂົ້າສູ່ໄລຍະຄວາມຈະເລີນຮຸ່ງເຮືອງເຖິງຂັ້ນສູງສຸດ (ສະເຫຼີມສັກ ພາບຸດດີ, 2005).

ໃນສະໄໝນີ້ຊົນຊັ້ນສັກດີນາລາວເຮັດຫຼອນໜ້າທີ່ປະຫວັດສາດມອບໝາຍໃຫ້ເຊັ່ນ:

- ດ້ານສາສະໜາ: ບັນດາອານາຈັກອ້ອມຂ້າງໄດ້ເຂົ້າມາລ້ານຊ້າງເພື່ອຮ່ຳຮຽນເອົາຄຳພີພະໄຕປີດົກ, ພະພຸດ, ພະທຳ, ພະວິໄນ.
- ການປົກປັກຮັກສາ ແລະສ້າງສາປະເທດຊາດ: ເສດຖະກິດ ແລະວັດທະນະທຳຂະຫຍາຍຕົວໄປຄຽງຄູ່ກັນ, ຕົວເມືອງ ແລະວັດໄດ້ຮັບການສ້າງຂື້ນເຊັ່ນ: ວັດຈອມແຈ້ງ, ພະອົງຕື້, ວັດສີບຸນເຮືອງ, ທາດອິງຮັງ, ທາດຫຼວງວຽງຈັນ. ໃນລັດຊະການຂອງເຈົ້າສຸລິຍະວົງສາ ໄດ້ສ້າງຫຼາຍວັດເຊັ່ນ ວັດສີສະເກດ, ວັດພະແກ້ວ, ວັດຈັນ, ວັດສີພຸດທະບາດ, ວັດໃໝ່ ...

ດ້ານເສດຖະກິດ-ວັດທະນະທຳ: ໃນສະຕະວັດທີ XVII ເສດຖະກິດຂອງອານາຈັກລາວລ້ານຊ້າງໄດ້ກ້າວເຖິງຂັ້ນຈະເລີນຮຸ່ງເຮືອງກວ່າສັດຕະວັດອື່ນໆຢ່າງຈະແຈ້ງໂດຍໄດ້ຮັບການເອົາໃຈໃສ່ ແລະ ປຸກລະດົມຂອງລັດ, ໃຕ້ສະພາບການເມືອງສະຫງົບສຸກ. ເຫດນັ້ນກະສິກຳຊາວນາ ການຂະຫຍາຍຕົວເນື້ອທີ່ດິນໃນການປູກຝັງໄດ້ຂະຫຍາຍຕົວ ຜະລິດຕະພັນກະສິກຳອຸດົມສົມບູນກວ່າເກົ່າ.

ແຂກຕ່າງປະເທດໄລຍະທີ່ເຂົ້າມາລາວກໍໃຫ້ຄວາມສັງເກດວ່າ: "ອານາຈັກລາວແມ່ນເຂດແຫ່ງການປູກຝັງ "ຜະລິດຕະພັນກະສິກຳໄດ້ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ, ການເປັນຢູ່ອຸດົມສົມບູນ, ປະຊາລາຊະດອນໄດ້ຮ່ຳຮຽນວິທີທຳມາຫາກິນ, ທຸກຄົນມີຊີວິດອີ່ມໜຳສຳລານ, ຊີວິດການເປັນຢູ່ພຽງພໍ. ເຫດນັ້ນເອງຖ້າເວົ້າເຖິງການລັກປຸ້ນແມ່ນເປັນເລື່ອງແປກປະຫຼາດທີ່ສຸດ. ທຸກຄຳເຫັນຂ້າງເທິງແມ່ນໄດ້ຢັ້ງຢືນວ່າ: ເສດຖະກິດຂອງລາວໄດ້ກ້າວສູ່ການຈະເລີນຮຸ່ງເຮືອງຮອບດ້ານ ແລະ ທົ່ວເຖິງ. ດ້ານຫັດຖະກຳ, ນອກຈາກຜະລິດຕະພັນທີ່ໄດ້ຈາກຄອບຄົວແລ້ວ ຍັງມີຫຼາຍຂະແໜງຫັດຖະກຳລວມໝູ່ຜະລິດເພື່ອຂ້າຂາຍຢູ່ໃນຕະຫຼາດໃນເມືອງ, ສິລະປະຫັດຖະກຳໄດ້ຮັບການຂະຫຍາຍຕົວກວ່າເກົ່າ, ດ້ານປະລິມານກໍຫຼາຍຂຶ້ນ ນັ້ນແມ່ນວິຊາຊ່າງເພັດເຮັດເຄື່ອງເອ້,ຄວັດລວດລາຍ, ວິຊາທໍຜ້າສາວໄໝ, ຫຼໍ່ທອງ ຫຼອມເຫຼັກ, ຊ່າງກວຽນ, ຊ່າງເຮືອນ, ຊ່າງລະບານສີ, ຊ່າງປັ້ນ, ຊ່າງໄມ້, ຊ່າງກໍ່ ແລະ ຊ່າງຈັກສານອື່ນໆ.

ລະດັບການຂະຫຍາຍດ້ານສິລະປະຫັດຖະກຳຂອງລາວເຮົາມີບາງຊະນິດທີ່ລືຊື່ ແລະ ໄດ້ຮັບການຍ້ອງຍໍຈາກແຂກຕ່າງປະເທດ ແລະ ຊາວຄ້າໃນເອີລົບຄື: "ສາດທີ່ເຮັດດ້ວຍຜືສິລະປະການຕ່ຳແບບນຽມ, ມີການສະດັບຮູບພາບ, ຮູບດອກໄມ້ທີ່ມີກິ່ງງ່າສານກັນຢ່າງຄ່ອງແຄ້ວງາມຕາ ຈົນເຖິງຂັ້ນວ່າ ບໍ່ມີຫຍັງທຽບໄດ້" ການປັ້ນໝໍ້ທໍໄໝ, ການຂຸດຄົ້ນບໍ່ເກືອ , ບໍ່ຄຳກໍໄດ້ຂະຫຍາຍຕົວ ແລະ ມີກຳລັງແຮງຫຼາຍ, ສິລະປະຂຸດຄົ້ນ ແລະ ຊ່າງປັ່ນຫຼໍ່ສີມືດີ. ຍ້ອນການຂະຫຍາຍຕົວທາງດ້ານຫັດຖະກຳ, ການພົວພັນຄ້າຂາຍພາຍໃນ ແລະ ຕ່າງປະເທດກໍໄດ້ຮັບການເຄື່ອນໄຫວເປັນປົກກະຕິ ແລະ ທົ່ວເຖິງ. ມີຫຼາຍເມືອງເປັນໃຈກາງແຫ່ງການຄ້າຂາຍທີ່ສຳຄັນຂອງລາວ ແລະ ຕ່າງປະເທດຄື: ເມືອງຫຼວງພະບາງ, ເມືອງວຽງຈັນ,

ເມືອງທ່າແຂກ, ເມືອງຮ້ອຍເອັດ, ເມືອງຈຳປາສັກ ແລະ ເມືອງພວນ... ການພົວພັນການຄ້າກັບຕ່າງປະເທດທາງນ້ຳແມ່ນອີງໃສ່ແມ່ນ້ຳຂອງ, ທາງບົກແມ່ນເສັ້ນທາງຊາຍແດນລາວ-ຂະແມ, ລາວ-ສະຫຍາມ, ລາວ-ຫວຽດນາມ ແລະ ລາວ-ຈີນ.

ລາວໄດ້ມີຊື່ສຽງໂດ່ງດັງອອກນອກປະເທດດ້ວຍການນິຍົມຊົມຊອບຈາກຊາວຄ້າຂາຍເອີລົບເອີ້ນວ່າ: "ອານາເຂດຂອງຄັ່ງ ແລະ ຍານ" ບົດບັນທຶກຂອງເອີລົບຂຽນວ່າ: ຄວາມຮັ່ງມີສີວິໄລຂອງອານາຈັກລາວແຕ່ລະປີເຈົ້າຊີວິດເກັບກູ້ຄັ່ງ ແລະ ຍານໄດ້ປະມານ 160 ໂຕນ (ສົມທະເພີຍ ສີວົງສັກ ແລະອໍາໄພ ສອນທະລາ, 2019).

**1.3 ສະພາບວັນນະຄະດີ** (30 ນາທີ)

ກິດຈະກຳ 3:

ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ:

1. ລັກສະນະລວມຂອງວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງເປັນແນວໃດ? (ເວົ້າໂດຍຫຍໍ້)
2. ບົດວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງບົດທຳອິດມີຊື່ວ່າແນວໃດ?
3. ບົດວັນນະຄະດີຂຽນໃນສະໄໝອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງມີບົດໃດແດ່?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູນັກສຶກສາສະຫຼຸບຮ່ວມກັນ: (20 ນາທີ)

ການທີ່ຈະນຳສະເໜີວັນນະຄະດີສະໄໝໜຶ່ງບໍ່ແມ່ນງ່າຍພໍປານໃດເວລາທີ່ບໍ່ທັນມີຜູ້ໃດເອົາໃຈໃສ່ຄົ້ນຄວ້າຕີລາຄາຢ່າງເປັນລະບົບຄັກແນ່. ແຕ່ເຖິງຢ່າງໃດກໍຕາມແຕ່ກໍຍັງມີນັກຄົ້ນຄວ້າໃຫ້ຮູ້ວ່າ ນັບແຕ່ສັດຕະວັດກ່ອນພຸ້ນ, ວັນນະຄະດີລາວແມ່ນໄດ້ຄັດມາຈາກວັນນະຄະດີຂະເໝນທີ່ໃຊ້ອັກສອນເປັນພາສາກາງ ເຊິ່ງໄດ້ລອກແບບມາຈາກວັນນະຄະດີອິນເດຍສະ ໄໝບູຮານທີ່ແຜ່ຂະຫຍາຍເຂົ້າມາໂດຍນັກປາດອາຈານເຂົ້າມາເຜີຍແຜ່ສາສະໜາພາມ ແລະ ສາສະໜາພຸດ. ໃນສະໄໝນັ້ນໄດ້ສິ່ງຜົນສະທ້ອນເຖິງວັດທະນະທຳ ແລະ ວັນນະຄະດີຂອງພວກເຮົາບັນດາບົດດັ່ງກ່າວແມ່ນເທດທຳລຳສູດທີ່ຂຽນດ້ວຍຕົວອັກສອນ (ໜັງສືບາລີ - ສັນສະກິດ) ທີ່ເພິ່ນຈາລຶກເຖິງທຳມະວິໄນ, ຄຳສອນຂອງພະພຸດທະເຈົ້າເຂົ້າມາເຜີຍແຜ່ໃນສຸວັນນະພູມລາວ ຫຼື ແຫຼມທອງ, ເຮັດໃຫ້ວັດທະນະທຳໂດຍສະເພາະພາສາຄຳເວົ້າຂອງປະຊາຊົນລາວມີແບບແຜນຫຼັກເກນຂຶ້ນຕື່ມ.

- ➢ ໜັງສືລາວ ມີເຄົ້າກຳເນີດມາຈາກໜັງບາລີ-ສັນສະກິດເພື່ອດັດແປງເປັນໜັງສືລາວ
- ➢ ວັນະຄະດີຂຽນກຳເນີດມາຄຽງຄູ່ກັບໜັງສື
- ➢ ບົດ ວດ ແມ່ນໝາກຜົນຂອງການຂີດຂຽນຂອງບັນດານັກປະດິດແຕ່ງ.
- ✓ ລັກສະນະລວມຂອງວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງມີດັ່ງນີ້:
- ➢ ຂີດຂຽນລົງໃບລານ ຈັດເປັນຜູກເປັນມັດ ເອີ້ນວ່າ "ລຳ" ຫຼື "ໜັງສື".
- ➢ ການເກັບຮັກສາບໍ່ດີ ຖືກຜຸດົກ ຫຼືປວກກິນ
- ➢ ມີການຈົດກ່າຍ ຫຼືລຶດຈະນາຄືນ ເຮັດໃຫ້ຂໍ້ມູນມີການຄາດເຄື່ອນ (ບໍ່ຊັດເຈນ)
- ➢ ບໍ່ມີຊື່ຜູ້ແຕ່ງ, ຜູ້ກ່າຍຄື ແລະຜູ້ຈ້າງກ່າຍ.

- ຖືກພວກສັກດິນາສະຫຍາມເກັບກວດເອົາໄປໄວ້ຫໍສະໝຸດແຫ່ງຊາດຂອງໄທເຖິງປັດຈຸບັນ.
- ໃນປັດຈຸບັນນັກຄົ້ນຄວ້າຈຳຕ້ອງໄດ້ຍອມຮັບຊື່ວຄາວວ່າ ໂດຍອີງໃສ່ຂໍ້ມູນທີ່ມີພຽງແຕ່ໄລຍະສະຖາປະນາເປັນອານາຈັກລາວລ້ານຊຸ້ນຊ້າງເອກະພາບເມື່ອກາງ ສວ ທີ 14 ນັ້ນໄດ້ຖືເອົາ "ຄຳໂອວາດຂອງເຈົ້າຟ້າງຸ່ມ" ເປັນບົດປະພັນສະບັບປະຖົມມະລຶກຂອງລາວ.
- ເມື່ອຂຶ້ນຄອງລາຊະບັນລັງ ເຈົ້າຟ້າງຸ່ມໄດ້ນຳເອົາສາສະໜາພຸດລັດທິຫີນະຍານເຂົ້າມາເຜີຍແຜ່ຢູ່ໃນອານາຈັກລາວລ້ານຊ້າງຊຸ່ມປີ 60 ແຫ່ງສະຕະວັດທີ 14.
- ມາຮອດ ສວ 16 (ໂພທິສະລາດ ແລະ ເສດຖາທິລາດ) ຖືເປັນສະຕະວັດແຫ່ງການຟື້ນຟູ. ພະມະຫາເທດຫຼວງໄດ້ສຳເລັດການແຕ່ງ "ນິທານຂຸນບູລົມ" ເປັນພົງສາວະດານສະບັບທຳອິດຂອງຊາດລາວ, ພະສັງຄະລາດເຈົ້າວັດວິຊຸນໄດ້ແປເລື່ອງ "ປັນຈະຕັນຕະ" ຈາກບາລີເປັນລາວ, ພະອະລະຍະວັງໂສໄດ້ແຕ່ງ ນິທານ "ພະແກ້ວ, ພະບາງ, ພະແຊກຄຳ, ພະແກ່ນຈັນ ແລະນິທານຂຸນບູລົມສະບັບທີ 2 " ພິເສດ ມີບົດວັນນະກຳເລື່ອງ "ທ້າວຮຸ່ງທ້າວເຈືອງ" ທີ່ເປັນບົດວັນນະກຳຊັ້ນຍອດຂອງລາວເຮົາ.
- ກ້າວເຂົ້າສູ່ສະຕະວັດທີ 17 ແມ່ນສະຕະວັດແຫ່ງການຈະເລີນຮຸ່ງເຮືອງທຸກດ້ານຂອງອານາຈັກລາວລ້ານຊ້າງ, ເປັນໄລຍະແຫ່ງການຂະຫຍາຍຕົວຂຶ້ນສູ່ຍອດສູງຂອງວັນນະຄະດີລາວເຮົາ.
- ມີນັກຂຽນ, ນັກກະວີ, ບົດກະວີນິຍາຍ, ຄຳຮ້ອຍແກ້ວ... ກຳເນີດເກີດຂຶ້ນຢ່າງຫຼວງຫຼາຍເຊັ່ນ ເລື່ອງ "ສຽວສະຫວາດ, ສີທົນ, ສິນໄຊ, ແຕງອ່ອນ, ກາລະເກດ, ຈຳປາສີ່ຕົ້ນ, ຈັນທະຄາດ, ທ້າວຄຳສອນ, ທ້າວລິ້ນທອງ, ຂຸນລູນາງອົ້ວ, ຊະນະສັນທະ, ປູ່ສອນຫຼານ, ຫຼານສອນປູ່, ອິນທິຍານສອນລູກ, ...".
- ບັນດາບົດດັ່ງກ່າວສ່ວນໃຫຍ່ແມ່ນອີງໃສ່ໂຄງຮ່າງຂອງເລື່ອງອິນເດຍບູຮານ, ອີງໃສ່ຊີວິດຕົວຈິງຂອງສັງຄົມລາວ, ຮຸ່ງເຮືອງ ແຕ່ມີຂໍ້ຂັດແຍ່ງ ແລະການຕໍ່ສູ້ຊິງຊັ້ນ, ສ້າງໄປຕາມລັດທິຂອງສາສະໜາ ພຸດ (ບາບ, ບຸນ, ຄຸນ, ໂທດ), ອດ ສະໄໝນີ້ໄດ້ກາຍເປັນແສງສະຫວ່າງແກ່ ອດ ຕໍ່ມາສືບຕໍ່ຂະຫຍາຍຕົວ (ບໍ່ແສງຄຳ ວົງດາລາ ແລະຄະນະ: 1987; ກຽງແກ້ວ ນອນນະວົງ ພ້ອມຄະນະ, 2002).

## III. ຂັ້ນສະຫຼຸບ

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ສະພາບທາງດ້ານພູມສາດ
- ສະພາບປະຫວັດສາດ
- ສະພາບວັນນະຄະດີ

## IV. ວັດ ແລະປະເມີນ

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ?
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

## V. ຂັ້ນຕັກເຕືອນ

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ພ້ອມຄະນະ. (2002). ວັນນະຄະດີລາວ 630LI222 ວິທະຍາໄລວິທະຍາສາດພື້ນຖານ ມະຫາວິທະຍາໄລແຫ່ງຊາດ.

ສະເຫຼີມສັກ ພາບຸດດີ. (2005). ປະຫວັດສາດລາວ ວິທະຍາໄລວິທະຍາສາດພື້ນຖານ ມະຫາວິທະຍາໄລແຫ່ງຊາດ.

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

ບໍ່ແສງຄຳ ວົງດາລາ ແລະຄະນະ. (1987). ວັນນະຄະດີລາວ ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ສານັກພິມສຶກສາ ຫວຽດນາມ.

ຄູສອນປະຈຳວິຊາ



ປທ.ສົມທະເພີຍ ສີວົງສັກ